# ປະກາດແຈ້ງການກ່ຽວກັບສິດປະໂຫຍດທີ່ມີພາຍໃຕ້ M.G.L. Chapter 175M
# ການລາຢຸດງານດ້ວຍເຫດຜົນທາງຄອບຄົວ ແລະ ທາງການແພດ (PFML)

## ວັນລາຢຸດທີ່ມີໃຫ້

ບຸກຄົນທີ່ໄດ້ຮັບຄວາມຄຸ້ມຄອງອາດຈະມີສິດລາຢຸດງານດ້ວຍເຫດຜົນທາງຄອບຄົວ ແລະ ທາງການແພດດ້ວຍເຫດຜົນດັ່ງຕໍ່ໄປນີ້:

- ລາຢຸດງານດ້ວຍເຫດຜົນທາງການແພດໂດຍໄດ້ຮັບຄ່າຈ້າງໄດ້ສູງສຸດເຖິງ 20 ອາທິດໃນໜຶ່ງປີຜົນປະໂຫຍດຖ້າເຂົາເຈົ້າມີພາວະສຸຂະພາບຮ້າຍແຮງ ຈົນເຮັດໃຫ້ເຂົາເຈົ້າບໍ່ສາມາດເຮັດວຽກໄດ້.
- ລາຢຸດງານດ້ວຍເຫດຜົນທາງຄອບຄົວໂດຍໄດ້ຮັບຄ່າຈ້າງໄດ້ສູງສຸດເຖິງ 12 ອາທິດໃນໜຶ່ງປີຜົນປະໂຫຍດທີ່ກ່ຽວຂ້ອງກັບການຄອດບຸດ, ການຮັບ ບຸດບຸນທຳ ຫຼື ການຈັດຫາທີ່ຢູ່ອາໄສໃຫ້ລູກອຸປະຖຳ, ການດູແລສະມາຊິກໃນຄອບຄົວທີ່ມີພາວະສຸຂະພາບຮ້າຍແຮງ ຫຼື ເນື່ອງຈາກຄວາມຈຳເປັນເລັ່ງດ່ວນຕາມເກນກຳນົດເນື່ອງຈາກຂໍ້ເທັດຈິງທີ່ສະມາຊິກໃນຄອບຄົວຄົນໃດໜຶ່ງຕ້ອງເຂົ້າປະຈຳການທາງທະຫານ ຫຼື ໄດ້ຮັບແຈ້ງວ່າມີການເອີ້ນຕົວ ໃຫ້ໄປປະຈຳການທາງທະຫານໃນກອງທັບທີ່ກຳລັງຈະເກີດຂຶ້ນ.
- ລາຢຸດງານດ້ວຍເຫດຜົນທາງຄອບຄົວໂດຍໄດ້ຮັບຄ່າຈ້າງໄດ້ສູງສຸດເຖິງ 26 ອາທິດໃນໜຶ່ງປີຜົນປະໂຫຍດເພື່ອດູແລສະມາຊິກໃນຄອບຄົວທີ່ເປັນທະຫານ ທີ່ໄດ້ຮັບຄວາມຄຸ້ມຄອງທີ່ມີພາວະສຸຂະພາບຮ້າຍແຮງ.

ບຸກຄົນທີ່ ໄດ້ຮັບຄວາມຄຸ້ມຄອງມີສິດ ຈະລາຢຸດງານດ້ວຍເຫດຜົນທາງຄອບຄົວ ແລະ ດ້ວຍເຫດຜົນທາງການແພດໂດຍໄດ້ຮັບ

## ຄ່າຈ້າງລວມກັນໄດ້ ບໍ່ເກີນ 26 ອາທິດໃນໜຶ່ງ ໆ ປີຜົນປະໂຫຍດ.

### ສິດປະໂຫຍດ

ເພື່ອເປັນທຶນໃຫ້ໂປຣແກຣມ PFML ນາຍຈ້າງສາມາດຫັກເງິນສົມທົບອອກຈາກບັນຊີເງິນເດືອນໄດ້ສູງສຸດເຖິງ 0.46% (ປັບທຸກປີ) ຈາກຄ່າຈ້າງ ຫຼື ລາຍໄດ້ຂອງບຸກຄົນທີ່ ໄດ້ຮັບຄວາມຄຸ້ມຄອງ. ລາຍໄດ້ສະເລ່ຍໃນແຕ່ລະອາທິດຂອງບຸກຄົນທີ່ ໄດ້ຮັບຄວາມຄຸ້ມຄອງຈະເປັນຕົວກຳນົດຈຳນວນສິດປະໂຫຍດຂອງເຂົາເຈົ້າ ສຳລັບສິດປະໂຫຍດໃນແຕ່ລະອາທິດສູງສຸດບໍ່ເກີນ 1,230.39 ໂດລາ (ປັບທຸກປີ).

## ບຸກຄົນໃດທີ່ ເປັນບຸກຄົນທີ່ ໄດ້ຮັບຄວາມຄຸ້ມຄອງພາຍໃຕ້ກົດໝາຍ?

ໂດຍທົ່ວໄປແລ້ວ ລູກຈ້າງມີຄຸນສົມບັດເປັນບຸກຄົນທີ່ໄດ້ຮັບຄວາມຄຸ້ມຄອງທີ່ມີສິດໄດ້ຮັບສິດປະໂຫຍດ PFML ຖ້າເຂົາເຈົ້າ:

- ໄດ້ຮັບຄວາມຄຸ້ມຄອງໂດຍປະກັນການຫວ່າງງານໃນລັດ Massachusetts ແລະໄດ້ຮັບເງິນຄ່າຈ້າງຈາກນາຍຈ້າງໃນລັດ Massachusetts ຫຼື
- ເປັນບຸກຄົນທີ່ປະກອບອາຊີບອິດສະຫຼະທີ່ອາໄສແລະເຮັດວຽກຢູ່ໃນລັດ Massachusetts ແລະເລືອກທີ່ຈະເຂົ້າຮ່ວມໃນໂປຣແກຣມ ແລະ
- ມີລາຍໄດ້ຢ່າງໜ້ອຍ 30 ເທົ່າຂອງຈຳນວນເງິນຊ່ວຍເຫຼືອທີ່ຄາດໄວ້ ແລະຢ່າງໜ້ອຍ 6,300 ໂດລາ (ປັບທຸກປີ) ໃນຊ່ວງສີ່ ໄຕມາດທີ່ຄົບຖ້ວນຫຼ້າສຸດ ກ່ອນການຍື່ນຂໍຮັບເງິນຊ່ວຍເຫຼືອ.

## ການຄຸ້ມຄອງວຽກງານ

ໂດຍທົ່ວໄປແລ້ວ ລູກຈ້າງທີ່ ໄດ້ລາຢຸດງານດ້ວຍເຫດຜົນທາງຄອບຄົວ ແລະດ້ວຍເຫດຜົນທາງການແພດຈະຕ້ອງໄດ້ກັບຄືນໄປເຮັດວຽກໃນຕຳແໜ່ງເກົ່າ ຫຼືເທົ່າທຽມຕຳແໜ່ງເກົ່າ ພ້ອມທັງຕ້ອງໄດ້ສະຖານະ, ຄ່າຈ້າງ, ສິດປະໂຫຍດຈາກການຈ້າງງານ, ການນັບໄລຍະເວລາທີ່ໄດ້ເຮັດວຽກມາ, ແລະລະດັບໄລຍະວຸດທິກ່ຽວກັນກັບວັນທີລາຢຸດງານ. *ການຄຸ້ມຄອງວຽກງານເຫຼົ່ານີ້ບໍ່ໃຊ້ກັບອະດີດລູກຈ້າງ, ຜູ້ຮັບເໝົາອິດສະຫຼະ ຫຼື ບຸກຄົນທີ່ປະກອບອາຊີບອິດສະຫຼະ.*

## ປະກັນສຸຂະພາບ

ນາຍຈ້າງຈະຕ້ອງຈັດໃຫ້ມີ, ສົ່ງເງິນສົມທົບ ຫຼື ຮັກສາສິດປະໂຫຍດຂອງລູກຈ້າງຈາກການຈ້າງງານທີ່ກ່ຽວຂ້ອງກັບສະວັດດີການດ້ານການ ປະກັນສຸຂະພາບ ຖ້າມີ ໃນລະດັບແລະພາຍໃຕ້ການຄຸ້ມຄອງພາວະສຸຂະພາບທີ່ອາດຈະຕ້ອງຈັດຫາໃຫ້ໃນກໍລະນີທີ່ລູກຈ້າງໄດ້ສືບຕໍ່ເຮັດວຽກຢ່າງຕໍ່ເນື່ອງຕະຫຼອດໄລຍະເວລາໃນການລາຢຸດງານດັ່ງກ່າວ

Paid Family & Medical Leave
MASSACHUSETTS

## ແຜນເອກະຊົນ

ຖ້ານາຍຈ້າງສະເໜີໃຫ້ລູກຈ້າງລາພັກງານດ້ວຍເຫດຜົນທາງຄອບຄົວ, ເຫດຜົນທາງການແພດ ຫຼື
ທັງສອງຢ່າງໂດຍໄດ້ຮັບຄ່າຈ້າງ
ໂດຍມີສິດປະໂຫຍດທີ່ ຢ່າງໜ້ອຍດີເທົ່າກັບທີ່ ມີການສະເໜີໃຫ້ພາຍໃຕ້ກົດໝາຍ
ນາຍຈ້າງອາດຈະສາມາດສະໝັກຂໍຮັບການຍົກເວັ້ນຈາກການຈ່າຍເງິນສົມທົບ.
ລູກຈ້າງຈະສືບຕໍ່ໄດ້ຮັບຄວາມຄຸ້ມຄອງພາຍໃຕ້ກົດໝາຍຈາກການເລືອກປະຕິບັດແລະການແກ້ແຄ້ນ
ເຖິງແມ່ນວ່ານາຍຈ້າງຈະເລືອກທີ່ຈະໃຫ້ສະຫວັດດີການໃນການລາພັກງານໂດຍໄດ້ຮັບຄ່າຈ້າງຜ່ານ ແຜນປະກັນເອກະຊົນ.

ຊື່ບໍລິສັດປະກັນເອກະຊົນ: ______________________________

ແຜນປະກັນເອກະຊົນແມ່ນສຳລັບ: ☐ ການແພດ ☐ ຄອບຄົວ ☐

ທັງສອງຢ່າງ ທີ່ ຢູ່:______________________________

ໂທລະສັບ: ______________________________

ເມືອງ, ລັດ ແລະ ລະຫັດໄປສະນີ: ______________________________

ເວັບໄຊ: ______________________________

## ການບໍ່ເລືອກປະຕິບັດ ຫຼື ການບໍ່ແກ້ແຄ້ນ

- ມັນເປັນສິ່ງຜິດກົດໝາຍທີ່ ນາຍຈ້າງຈະເລືອກປະຕິບັດ ຫຼືແກ້ແຄ້ນຕໍ່ລູກຈ້າງຍ້ອນການໃຊ້ສິດໃດໆທີ່ເຂົາເຈົ້າມີພາຍໃຕ້ກົດໝາຍ.
- ລູກຈ້າງ ຫຼື ອະດີດລູກຈ້າງທີ່ຖືກເລືອກປະຕິບັດ ຫຼືຖືກແກ້ແຄ້ນຈາກການໃຊ້ສິດພາຍໃຕ້ກົດໝາຍອາດຈະສາມາດຮ້ອງຟ້ອງຄະດີແພ່ງໃນສານສູງໄດ້ບໍ່ເກີນສາມປີຫຼັງເກີດການລະເມີດຂຶ້ນ ແລະອາດຈະມີສິດໄດ້ຮັບຄ່າເສຍຫາຍໄດ້ເຖິງສາມເທົ່າຂອງຄ່າຈ້າງທີ່ສູນເສຍໄປ

**ຖ້າທ່ານມີຄຳຖາມ ຫຼື ຂໍ້ກັງວົນກ່ຽວກັບສິດໃນ PFML ຂອງທ່ານ ໃຫ້ໂທໄປທີ່ : (833) 344-7365 ຫຼື ເຂົ້າເບິ່ງ mass.gov/dfml**

**ຕ້ອງຕິດປະກາດແຈ້ງການນີ້ ໄວ້ທີ່ບໍລິເວນທີ່ມອງເຫັນໄດ້ ຊັດເຈນໃນສະຖານປະກອບການຂອງນາຍຈ້າງ.**

Paid Family & Medical Leave
MASSACHUSETTS